FaithTrust INSTITUTE

ຮ່ວມມືກັນເພື່ອຢຸດຕິການທຳຮ້າຍທາງເພດ
ແລະ ການໃຊ້ກຳລັງທຳຮ້າຍພາຍໃນບ້ານ

(877) 860-2255
www.faithtrustinstitute.org

*This brochure is also available in Spanish, English, Korean, Vietnamese, and Traditional Chinese.*
*ໜັງສືນີ້ມີໃຫ້ເປັນພາສາສແປນິຊ, ພາສາອັງກິດ, ພາສາເກົາຫຼີ, ພາສາຫວຽດນາມ, ແລະ ພາສາຈີນ.*

© 2002, FaithTrust Institute
Rev. 04/06
ຫ້າມທຳການຜລິດໃໝ່ໂດຍບໍ່ໄດ້ຮັບອະນຸຍາດ

FaithTrust INSTITUTE

ຮ່ວມມືກັນເພື່ອຢຸດຕິການທຳຮ້າຍທາງເພດ ແລະ ການໃຊ້ກຳລັງທຳຮ້າຍພາຍໃນບ້ານ.

# ເມື່ອມີການຊຸມນຸມສາສນາ ແຕ່ລະຄັ້ງ ແມ່ນຫຍັງທີ່ຕ້ອງການຢາກຮູ້ກ່ຽວກັບການໃຊ້ກຳລັງທຳຮ້າຍພາຍໃນບ້ານ...

## ຂໍ້ມູນສຳລັບນັກບວດພຣະຄຣິສ, ສະມາຊິກທີ່ຊຸມນຸມ ສາສນາ, ໂຄງການແມ່ຍິງທີ່ຖືກທຸບຕີ, ແລະ ຜູ້ຊ່ວຍຈັດຫາການບໍຣິການແຫ່ງມະນຸສ.

What every congregation needs to know about domestic violence...

Laotian

**ຖ ການໃຊ້ກຳລັງທຳຮ້າຍພາຍໃນບ້ານແມ່ນຫຍັງ?**

ຕ ການໃຊ້ກຳລັງທຳຮ້າຍພາຍໃນບ້ານອ້າງເຖິງແບບຕົວຢ່າງຂອງການປະພຶດທີ່ຮຸນແຮງແລະເປັນການບັງຄັບຊຶ່ງຜູ້ໃຫຍ່ພາຍໃນບ້ານເປັນຄົນກະທຳຕໍ່ຄົນອື່ນ ຊຶ່ງເປັນຍາຕພີ່ນ້ອງທີ່ຄຸ້ນເຄີຍໃກ້ສິດກັນ. ມັນບໍ່ແມ່ນ "ການຂັດແຍ່ງ ຂອງຜົວເມັຽ," "ການດ່າປ້ອຍກັນຕາມລຳພັງ," "ການຜິດຖຽງກັນຣະຫວ່າງຄົນຮັກ, " ຫຼື "ກໍຣະນີສ່ວນຕົວຂອງຄອບຄົວ."

ມັນອາດຈະປະກອບດ້ວຍການທຸບຕີຢ່າງຮຸນແຮງຊ້ຳກັນ, ຫຼືເປັນຮູບແບບຂອງການເຮັດຜິດສິລທັມທີ່ສລາດແກມໂກງ, ລວມທັງການນາບຂູ່ ແລະການບັງຄັບ.

**ຖ ແມ່ນໃຜເປັນຜູ້ຮັບເຄາະຈາກການໃຊ້ກຳລັງທຳຮ້າຍພາຍໃນບ້ານ?**

ຕ ຕາມສະຖິຕິແລ້ວມີຜົລສະທ້ອນວ່າມີ 95% ຂອງຜູ້ເຄາະຮ້າຍຈາກການໃຊ້ກຳລັງທຳຮ້າຍພາຍໃນບ້ານເປັນຜູ້ຍິງທັງໝົດ, ຢ່າງໃດກໍດີຜູ້ຊາຍກໍອາດຖືກຮັບເຄາະຮ້າຍເໝືອນກັນ. ແຕ່ວ່າເຖິງແມ່ນວ່າຈະເປັນໃຜກໍຕາມທີ່ຖືກເຄາະຮ້າຍການໃຊ້ກຳລັງຮຸນແຮງພາຍໃນບ້ານແມ່ນເປັນບັນຫາອັນຮ້າຍແຮງຊຶ່ງຕ້ອງເວົ້າຈາກັນໃນຊຸມນຸມຊົນຂອງນັກສາສນາ.

**ຖ ການໃຊ້ກຳລັງທຳຮ້າຍພາຍໃນບ້ານມີການແຜ່ນິຍົມຢ່າງໃດ?**

ຕ ການສຳຣວດຈາກສະຫະຣັຖ ແລະການາດາໄດ້ຊີ້ບອກວ່າການໃຊ້ກຳລັງຮຸນແຮງພາຍໃນບ້ານເກີດຂຶ້ນຈາກການແຕ່ງງານກັນມີ 28%. ນັກຄົ້ນຄ້ວາເຊື່ອຖືວ່າການຄາດເດົານີ້ຍັງເປັນຈຳນວນຕ່ຳຢູ່ຍ້ອນສາເຫດການໃຊ້ກຳລັງຮຸນແຮງພາຍໃນບ້ານສ່ວນມາກບໍ່ໄດ້ຖືກລາຍງານໃຫ້ຊາບ.

**ຖ 4 ຊະນິດພື້ນຖານການໃຊ້ກຳລັງຮຸນແຮງພາຍໃນບ້ານມີຫຍັງແດ່?**

ຕ **ການທຳຮ້າຍຮ່າງກາຍ**

ປະກອບດ້ວຍ, ພັກດັນ, ຊຸກລົ້ມ, ບັງຄັບຈິດໃຈ, ທຸບຕີ ຫຼືເຕະຖີບ. ການທຳຮ້າຍຮ່າງກາຍອາດເກີດຂຶ້ນເປັນເນື່ອງນິດຫຼືບໍ່ເນື່ອງນິດ, ແຕ່ໃນຫຼາຍໆກໍຣະນີມັນອາດເພີ້ມທະວີການຮຸນແຮງ ແລະເລື້ອຍໆໂດຍບໍ່ຈຳກັດເວລາ.

**ການໃຊ້ກຳລັງບັງຄັບທາງເພທ**

ເກີດຂຶ້ນໄດ້ທຸກເມື່ອ ຊຶ່ງຄົນນຶ່ງໄດ້ບັງຄັບສົມສູ່ທາງເພທກັບອີກຄົນນຶ່ງທີ່ບໍ່ຕ້ອງການຫຼືປະຕິເສດ.

**ການບັງຄັບທາງດ້ານຈິດໃຈ**

ປະກອບດ້ວຍການໃຫ້ຢູ່ໂດດດ່ຽວຈາກຄອບຄົວແລະໝູ່ເພື່ອນ, ບັງຄັບໃຫ້ຂຶ້ນກັບຕົນທາງດ້ານການເງິນ, ການກະທຳທີ່ຊົ່ວຊ້າທາງວາຈາແລະທາງຈິດໃຈ ການຂົ່ມຂູ່ທຳລາຍ, ການຂູ່ຂວັນ, ແລະການຄວບຄຸມຮອດສະຖານທີ່ຄົນສນິດຂອງຕົນສາມາດຈະໄປ ແລະວ່າເຂົາກຳລັງສາມາດຈະເຮັດສິ່ງໃດ.

**ການບຸກລຸກທຳລາຍຊັພສິນແລະສັດລ້ຽງ**

ການທຳລາຍຊັພສິນສິ່ງຂອງຊຶ່ງອາດລວມທັງຊັພສົມບັດພາຍໃນບ້ານ ຫຼືຊັພສິນທີ່ເປັນຂອງຜູ້ຮັບເຄາະຮ້າຍ, ການທຸບຕີຝາບ້ານ, ຫຼືການກະທຳທາລຸນ ຫຼືການຂ້າສັດລ້ຽງອັນເປັນທີ່ຮັກ.

FT_DV_LAO.indd 1
4/6/06 3:21:25 PM

**ຖ** **ຂ້າພະເຈົ້າຈະຮູ້ໄດ້ຢ່າງໃດວ່າຜູ້ໃດນຶ່ງເປັນຄົນຖືກເຄາະຮ້າຍຈາກການໃຊ້ກຳລັງທຳຮ້າຍພາຍໃນບ້ານ?**

**ຕ** ແມ່ຍິງຄົນນຶ່ງຖືກທຳຮ້າຍຮ່າງກາຍເປັນຜູ້ທີ່ແຕກຕ່າງກັບຜູ້ທີ່ບໍ່ຖືກທຳຮ້າຍຮ່າງກາຍ. ເຂົາເຈົ້າມາຈາກການເດີນຂອງຊີວິດຫຼາຍຢ່າງ, ຫຼາຍຜິວພັນ, ຈາກເບື້ອງຫຼັງຂອງການສຶກສາຫຼາຍຢ່າງ ແລະສາສນາຫຼາຍຢ່າງ. ຜູ້ທີ່ຖືກທຸບຕີຮ່າງກາຍອາດຈະເປັນຮອງປະທານຂອງທະນະຄານທ້ອງຖິ່ນ, ເປັນນາຍຄູສອນລູກຂອງທ່ານທີ່ໂຮງຮຽນວັນອາທິດ, ຊ່າງເສີມສວຍ ຫຼືທ່ານໝໍປົວແຂ້ວຂອງທ່ານ. ຜູ້ຊຶ່ງປະສົບການທາງແບບສະບັບຂອງການປະຕິບັດຊົ່ວຊ້າທີ່ມີຢູ່ຂ້າງເທິງ ແມ່ນເປັນຜູ້ເຄາະຮ້າຍຈາກການໃຊ້ກຳລັງ ທຳຮ້າຍພາຍໃນບ້ານ.

**ຖ** **ເປັນຫຍັງແມ່ຍິງນັ້ນຈຶ່ງຢູ່ຕໍ່ໄປ?**

**ຕ** ລາວຈະຢູ່ຕໍ່ໄປເພາະວ່າລາວມີຄວາມຫວາດກົວວ່າເຂົາຜູ້ຊາຍຈະກາຍເປັນຄົນປະພຶດທີ່ຮ້າຍແຮງຂຶ້ນກວ່າເດີມຖ້າຫາກວ່າຕົນເອງໜີໄປ, ຊຶ່ງຜູ້ຊາຍຈະພະຍາຍາມຍຶດເອົາລູກ, ຫຼື ຕົນເອງຜູ້ຍິງບໍ່ສາມາດຢູ່ໄດ້ດ້ວຍຕົນເອງ.

ຂ້າພະເຈົ້າຈະຕ້ອງເຮັດຫຍັງແດ່ ຖ້າຫາກວ່າຂ້າພະເຈົ້າເຊື່ອໝັ້ນວ່າຕົນເປັນຜູ້ເຄາະຮ້າຍຈາກການໃຊ້ກຳລັງຮຸນແຮງພາຍໃນບ້ານ?

- ເຊື່ອຖືໃນສັນຊາດຍານ ແລະຊອກຫາການຊ່ວຍເຫຼືອຈາກໂຄງການຕ້ານໃຊ້ກຳລັງທຳຮ້າຍໃນຊຸມຊົນຂອງທ່ານ.
- ຮັບຮູ້ວ່າການປະພຶດຊົ່ວຊ້ານັ້ນບໍ່ແມ່ນເປັນຄວາມຜິດຂອງຕົນ.
- ຮູ້ວ່າທ່ານບໍ່ໄດ້ຢູ່ຕາມລຳພັງຄົນດຽວ ແລະວ່າມີການຊ່ວຍເຫຼືອໃຫ້ທ່ານຢູ່.
- ໃຫ້ເວົ້າອອກມາຢ່າງໝັ້ນໃຈກັບຜູ້ໃດນຶ່ງທີ່ເຊື່ອຖືໄດ້: ຍາດພີ່ນ້ອງ, ເພື່ອນສະນິດ, ຫຼື ຖ້າວ່າທ່ານຮູ້ສຶກສະດວກໃຈ, ກັບຜູ້ນຳທາງສາສນາ.
- ຖ້າຫາກວ່າທ່ານຄັດເລືອກທີ່ຄົງຢູ່ກັບສະຖານະການດຽວນີ້ໃຫ້ວາງແຜນການທີ່ປອດພັຍຕໍ່ການປະພຶດ (ເຊັ່ນຕົວຢ່າງ, ເຊື່ອງກຸນແຈຣົຖ, ແລະເງິນສ່ວນນຶ່ງໄວ້ທີ່ປອດພັຍ, ໃຫ້ຊອກສະຖານທີ່ໃດນຶ່ງເພື່ອໄປຫາໃນກໍຣະນີສຸກເສີນ).

**ຖ** **ແມ່ນໃຜເປັນຄົນທຸບຕີທຳຮ້າຍ?**

**ຕ** ເໝືອນກັນກັບຜູ້ຍິງທີ່ຖືກທຸບຕີ, ຜູ້ຊາຍຊຶ່ງເປັນຄົນທຸບຕີທຳຮ້າຍບໍ່ໄດ້ຕົກຢູ່ໃນກໍຣະນີພິເສດໃດໆ. ເຂົາເຈົ້າກໍມາຈາກເບື້ອງຫຼັງຂອງຊົ້ນຊັ້ນທັງໝົດ, ຫຼາຍຜິວພັນ, ຫຼາສາສນາ, ແລະການເດີນຂອງຊີວິດທັງໝົດ. ເຂົາເຈົ້າອາດເປັນຄົນວ່າງງານຫຼືເປັນນັກວິຊາຊີພທີ່ມີເງິນເດືອນສູງ. ຜູ້ທຸບຕີທຳຮ້າຍຄົນອື່ນອາດເປັນນັກຊ່ວຍເຫຼືອທີ່ດີ, ເປັນຜູ້ທີ່ມີສະຕິສູງ, ແລະເປັນສະມາຊິກທີ່ດີໃນອົງການສັງຄົມ, ແລະເປັນສະມາຊິກທີ່ນັບຖືໃນຊຸມນຸມສາສນາ.

ຂ້າພະເຈົ້າຮູ້ໄດ້ຢ່າງໃດວ່າຕົນເປັນຄົນທຸບຕີທຳຮ້າຍຄົນອື່ນ?

- ຖ້າຫາກວ່າທ່ານມີຄວາມອິດສາຢ່າງສຸດຂີດ,
- ຖ້າທ່ານຄວບຄຸມກິຈະກັມຂອງຂາຄູ່ຂອງທ່ານ,
- ຖ້າວ່າທ່ານໃຊ້ກຳລັງເພື່ອແກ້ໄຂບັນຫາ, ແລະ
- ຖ້າວ່າທ່ານເຊື່ອວ່າທ່ານເອງເປັນຫົວໜ້າຂອງຄອບຄົວ ແລະຈະບໍ່ຕ້ອງມີການທ້າທາຍ,

ສະນັ້ນທ່ານອາດຈະເຮັດໃຫ້ຄົນທີ່ທ່ານຮັກ ຕ້ອງເຈັບປວດ ແລະທ່ານຕ້ອງເອົາການຊ່ວຍເຫຼືອຈາກຄົນຜູ້ຊຶ່ງຈະຍຶດຖືທ່ານເປັນຜູ້ຮັບຜດຊອບ. ຈົ່ງຮູ້ໄວ້ດ້ວຍວ່າການປະພຶດຮຸນແຮງ ແມ່ນເປັນບັນຫາຂອງທ່ານ ແລະ ຕ້ອງມີຄວາມກ້າຫານຊອກຫາຄວາມຊ່ວຍເຫຼືອ.

**ຖ** **ຂ້າພະເຈົ້າສາມາດເຮັດຫຍັງໄດ້ແດ່ຊຶ່ງເປັນການຊ່ວຍເຫຼືອຖ້າຫາກວ່າສະພາບການປະພຶດຊົ່ວຮ້າຍໄດ້ຖືກເປີດເຜີຍ?**

**ຕ**

- ໃຫ້ຮັບຟັງຜູ້ຍິງຄົນນັ້ນ ແລະໃຫ້ເຊື່ອລາວ.

  ໃຫ້ບອກລາວວ່າການປະພຶດຊົ່ວບໍ່ແມ່ນຄວາມຜິດຂອງລາວ, ແລະບໍ່ແມ່ນຄວາມປາຖນາຂອງພະເຈົ້າສຳລັບລາວ.
- ໃຫ້ບອກລາວວ່າລາວບໍ່ໄດ້ຢູ່ຄົນດຽວຕາມລຳພັງ ແລະວ່າມີການຊ່ວຍເຫຼືອໄວ້ໃຫ້.
- ໃຫ້ລາວຮູ້ວ່າປາສຈາກການພົວພັນກັບຄົນອື່ນ, ການປະພຶດຊົ່ວຮ້າຍຈະຕ້ອງເພີ້ມທະວີຄູນຂຶ້ນເລື້ອຍໆແລະຮຸນແຮງກວ່າເກົ່າໃນທັນທີທັນໃດ.
- ໃຫ້ຊອກຫາການຊ່ວຍເຫຼືອຈາກນັກຊ່ຽວຊານ. ໃຫ້ສົ່ງລາວໄປຫາໂຄງການແນະນຳພິເສດສະເພາະທາງດ້ານການໃຊ້ກຳລັງທຳຮ້າຍໃນບ້ານ, ບໍ່ແມ່ນການແນະນຳຂອງຜົວເມັຍ. ຊ່ວຍເຫຼືອລາວຫາບ່ອນພັກອາໃສ, ເຮືອນຢູ່ທີ່ປອດພັຍ, ຫຼື ຊັພະຍາກອນການແນະນຳທີ່ໃຫ້ຄວາມຊ່ວຍເຫຼືອປ້ອງກັນຕົວລາວ. ຂໍແນະນຳໃຫ້ລາວວ່າ ພຽງແຕ່ລາວກັບຄືນບ້ານໄປຈະເຮັດໃຫ້ລາວແລະລູກຂອງລາວຢູ່ໃນອັນຕະຣາຍທີ່ແທ້ຈິງ.
- ໃຫ້ເປັນພາລະຮັບຜິດຊອບຂອງຜູ້ປະພຶດຊົ່ວຮ້າຍ. ບໍ່ໃຫ້ຜ່ອນຜັນຍຸຍານການປະພຶດຊົ່ວຮ້າຍຂອງເຂົາ. ຊຸກຍູ້ເຂົາໃນການຊອກຫາຄຳແນະນຳພິເສດສະເພາະແກ່ຜູ້ມັກທຸບຕີເພື່ອຊ່ວຍປ່ຽນແປງການປະພຶດຂອງເຂົາ. ສືບຕໍ່ເກັບກຳຄວາມຮັບຜິດຊອບແລະໃຫ້ສນັບສນູນ ແລະປົກປ້ອງຜູ້ໄດ້ຮັບເຄາະກັມເຖິງວ່າເຂົາຈະເລີ້ມເຂົ້າອົບຮົມໂຄງການແນະນຳແລ້ວກໍຕາມ.
- ຖ້າວ່າການກັບມາສ້າງສາຍສັມພັນໃໝ່ເກີດຂຶ້ນ, ມັນອາດຈະຖືກພິຈາຣະນາສະເພາະແຕ່ຫຼັງຈາກບາດກ້າວຕ່າງໆຂ້າງເທິງໄດ້ຖືກປະຕິບັດແລ້ວເທົ່ານັ້ນ.

**ຖ** **ວິນັຍຄຳສອນທາງສາສນາໄດ້ສະແດງອອກແບບໃດກ່ຽວກັບການໃຊ້ກຳລັງຮຸນແຮງພາຍໃນບ້ານ?**

**ຕ** ການສິດສອນຂອງສາສນາສາມາດຮັບໃຊ້ໃຫ້ເປັນການເສັ້ນທາງຕັນຫຼືຊັພະຍາກອນໃນການບອກເລົ່າ ການໃຊ້ກຳລັງຮຸນແຮງພາຍໃນບ້ານ. ມັນບໍ່ໄດ້ມີຫຍັງໃນຄຳສັ່ງສອນຂອງສາສນາຢີວສ໌ຫຼືຄຣິສຕຽນຊຶ່ງສາມາດຕັດສິນໃຫ້ຖືກຕ້ອງກ່ຽວກັບການໃຊ້ກຳລັງທຳຮ້າຍພາຍໃນບ້ານ. ຢ່າງໃດກໍດີ, ໄດ້ມີຄຳສັ່ງສອນຫຼາຍຢ່າງ ຊຶ່ງສາມາດໃຊ້ໄປໃນທາງທີ່ຜິດແລະບິດ ເບືອນທີ່ຈະແນະນຳວ່າການໃຊ້ກຳລັງຮຸນ ແຮງພາຍໃນບ້ານຈະອາດຖືກຮັບເອົາຫຼືຕິ ສເມີກັບຄວາມຕ້ອງການຂອງພຣະເຈົ້າ. ເມື່ອເວລາຄຳສັ່ງສອນເຫຼົ່ານີ້ຫຼືການອະທິບາຍຂອງຄັມພີໄດ້ຖືກນຳໃຊ້ໄປໃນທາງຜິດ, ມັນຈະກາຍເປັນເສັ້ນທາງຕັນເພື່ອເຮັດໃຫ້ ການກະທຳຊົ່ວສິ້ນສຸດລົງ.

ຍົກຕົວຢ່າງ, ການອະພິປາຍຂອງ Shalom Bayit, ຄຳສັ່ງສອນຂອງສາສນາຢີວສ໌ ກ່ຽວກັບຄວາມສງົບສຸກຢູ່ໃນບ້ານ, ຊຶ່ງໃຫ້ເປັນໜ້າທີ່ຮັບຜິດຊອບຂອງແມ່ບ້ານແຕ່ພຽງຜູ້ດຽວໃນການ "ຮັກສາຄວາມສງົບ" ແລະ ຈົ່ງເຊື່ອຟັງສາມີຂອງຕົນ, ຈະເປັນຫີນທາງຕັນອັນຮ້າຍແຮງໃນການຊີ້ບອກການໃຊ້ກຳລັງຮຸນແຮງພາຍໃນບ້ານສຳລັບແມ່ຍິງທີ່ຖືກທຸບຕີ. ການເຂົ້າໃຈອັນນຶ່ງ Shalom Bayit ວ່າແມ່ນໜ້າທີ່ຮັບຜິດຊອບຂອງທຸກຄົນທີ່ຕ້ອງຊ່ວຍເຫຼືອແມ່ຍິງຜູ້ເຄາະຮ້າຍ ແລະ ໃຫ້ຜູ້ກະທຳຄວາມຜິດຕ້ອງຮັບຜິດຊອບ.

ເຊັ່ນດຽວກັນ, ຄຳສັ່ງສອນຂອງສານາຄຣິສຕຽນບອກວ່າສາມີທັງຫຼາຍທີ່ຮັກພັລຍາຂອງຕົນເປັນສເມືອນກັບພຣະເຢຊູທີ່ຮັກໂບດແມ່ນຄຳອະທິບາຍອັນນຶ່ງຕໍ່ສາມີທັງຫຼາຍທີ່ຕ້ອງດູແລພັລຍາຂອງຕົນດ້ວຍຄວາມເຄົາຣົບນັບຖືແລະຄວາມຮັກ, ບໍ່ແມ່ນດ້ວຍການປະພຶດຮຸນແຮງຫຼືຄວບຄຸມຫຼາຍຢ່າງ. ຄຳສັ່ງສອນນີ້ສາມາດຮັບໃຊ້ເປັນຊັພະຍາກອນອັນມີຄ່າເພື່ອທ້າທາຍແລະປົກປ້ອງການໃຊ້ກຳລັງທຳລາຍພາຍໃນບ້ານ.

ໃນຖານະເປັນອົງການຊຸມຊົນທາງສາສນາ, ຄວາມຕ້ອງການຂອງເຮົາແມ່ນຕ້ອງລົດນ້ອຍຖອຍລົງຂອງເສັ້ນທາງຕັນທີ່ປະເຊີນກັບສະມາຊິກຜູ້ຖືກທຳຮ້າຍຮຸນແຮງຂອງຄະນະຊຸມນຸມສາສນາຂອງພວກເຮົາແລະຕ້ອງເພີ້ມທະວີຊັພະຍາກອນທີ່ມີແລ້ວລະຫວ່າງປະເພນີທາງສາສນາຂອງພວກເຮົາ.

*"ໂອ່, ພູະຜູ້ເປັນເຈົ້າເອີຍ, ຂໍຈົ່ງເມດຕາສົງສານຜູ້ຂ້າແດ່ທ້ອນໃນຄວາມທຸກໂສກ ພ້ອມກັບຄວາມເສົ້າສະລົດໃຈ ຊຶ່ງກັດກິນຜານທຳຣາຍແກ່ນຕາ; ທັງວິນຍານ, ແລະຮ່າງກາຍຂອງຜູ້ຂ້າ.*

*ຜູ້ຂ້ານີ້ ປຽບເໝືອນຈານໃບທີ່ແຕກສລາຍ...*
*ແຕ່ສັດທາຂອງຜູ້ຂ້າແມ່ນຢູ່ໃນທ່ານ, ພູະຜູ້ເປັນເຈົ້າເອີຍ;*
*ຜູ້ຂ້າຂໍກ່າວວ່າ, 'ທ່ານແມ່ນພູະຜູ້ເປັນເຈົ້າຂອງຜູ້ຂ້າ'".*

*(Ps 31:10-15)*

**ຖ** **ໂບດຫຼືສະຖານທີ່ນະມັສການຂອງຊາວຢີວຕ້ອງເຮັດແນວໃດເພື່ອປ້ອງກັນການໃຊ້ກຳລັງທຳລາຍພາຍໃນບ້ານ?**

**ຕ**

- ປະກອບກັມມະການນຶ່ງເພື່ອແກ້ໄຂບັນຫາການໃຊ້ກຳລັງທຳລາຍພາຍໃນບ້ານ.
- ໃຫ້ກຳລັງໃຈຄະນະພຣະຄຣິສເພື່ອສະແດງຕໍ່ຕ້ານການໃຊ້ກຳລັງທຳລາຍພາຍໃນບ້ານຈາກລູກສິດ.
- ເຊື້ອເຊີນພະນັກງານຈາກໂຄງການຕ້ານການໃຊ້ກຳລັງທຳລາຍພາຍໃນບ້ານເພື່ອເຜີຍແຜ່ຄຳແນະນຳ.
- ແຕ່ງຕັ້ງເອົາວັນຫຼືເດືອນໃດນຶ່ງເພື່ອເຜີຍແຜ່ສິດສອນແລະເຮັດໃຫ້ຄະນະຊຸມນຸມຂອງຕົນມີການເຄື່ອນໄຫວ.
- ໃຫ້ການແນະນຳກ່ອນການແຕ່ງງານອັນໄດ້ແກ່ຄວາມສເມີພາບ, ຄວາມຂັດແຍ່ງ, ການໃຊ້ກຳລັງຮຸນແຮງແລະການຄວບຄຸມບີບບັງຄັບ.
- ສວຍໃຊ້ຫຼັກສູດທີ່ມີໃຫ້ແກ່ຊາວໜຸ່ມຊຶ່ງເປັນການເອົາໃຈຊ່ວຍເຖິງຄຸນຄ່າຂອງຄວາມສເມີພາບທາງດ້ານການເພດ ແລະການແກ້ໄຂໃນການຂັດແຍ່ງທີ່ບໍ່ໃຊ້ກຳລັງຮຸນແຮງ.
- ໃຫ້ສະຖານທີ່ປະຊຸມໃນໂບດຂອງທ່ານ ຫຼືສະຖານທີ່ນະມັສການຂອງສາສນາຢີວສ໌ ແກ່ໂຄງການຕ້ານການໃຊ້ກຳລັງທຳລາຍພາຍໃນບ້ານຕາມທ້ອງຖິ່ນ.
- ບໍຣິຈາກຊ່ວຍເຫຼືອສິ່ງເສີມດ້ານກຳລັງຊັພໃຫ້ແກ່ໂຄງການຕ້ານການໃຊ້ກຳລັງຮຸນແຮງພາຍໃນບ້ານ.

**ຖ** **ຂ້າພະເຈົ້າສາມາດຄົ້ນຫາເອົາຂ່າວເພີ້ມເຕີມຢູ່ໃສ?**

**ຕ** ໃຫ້ໂທຣະຊັບ:
ສຳລັບການບໍຣິການຜູ້ເຄາະຮ້າຍໃນສະຫະຣັຖ ຫຼືການາດາ ໃຫ້ເບິ່ງພາຍໃຕ້ "Abuse" ຫຼື "Community Services" ຢູ່ທາງໜ້າຂອງປຶ້ມໂທຣະຊັບຄູ່ມື.

ສຳລັບການບໍຣິການຜູ້ເຄາະຮ້າຍໃນສະຫະຣັຖ:
**National Domestic Violence Hotline**
(800) 799-SAFE (24 ຊົ່ວໂມງ)
(800) 787-3224 (TDD)
www.ndvh.org

ຫ້ອງການຊັພະຍາກອນແລະການຊ່ວຍເຫຼືອດ້ານເທັກນິກໃນສະຫະຣັດ
**National Resource Center on Domestic Violence**
(800) 537-2238 / www.pcadv.org

ສຳລັບການບໍຣິການຜູ້ເຄາະຮ້າຍໃນການາດາ:
**Assaulted Women's Helpline**
(416) 863-0511 (24 ຊົ່ວໂມງ)
www.awhl.org

ສຳລັບແມ່ຍິງທີ່ເວົ້າພາສາຝຣັ່ງໃນການາດາ:
**SOS Femmes**
(800) 387-8603 (ໃນການາດາ, 24 ຊົ່ວໂມງ)

ສຳລັບອປະກອນການສຶກສາໃນການາດາ:
**National Clearinghouse on Family Violence**
(800) 267-1291 (ພາຍໃນການາດາ)

ຂ່າວກ່ຽວກັບເຣື່ອງສາສນາ ແລະການໃຊ້ກຳລັງທຳລາຍໃນບ້ານ:
**FaithTrust Institute**
(877) 860-2255
www.faithtrustinstitute.org

© 2002, FaithTrust Institute Rev. 04/06
ຫ້າມທຳການຜລິດໃໝ່ໂດຍບໍ່ໄດ້ຮັບອະນຸຍາດ

FT_DV_LAO.indd 2
4/6/06 3:21:36 PM